

# ເງິນຊ່ວຍເຫຼືອດ້ານ ອາຫານຂອງທ່ານ ມີການປ່ຽນແປງ

## ນີ້ແມ່ນສິ່ງທີ່ທ່ານຕ້ອງຮູ້

ການຈັດສັນອາຫານສຸກເສີນກຳລັງສິ້ນສຸດລົງ **ໃນເດືອນກຸມພາ** ແລະຈຳນວນເງິນຊ່ວຍເຫຼືອດ້ານອາຫານຂອງທ່ານຈະຫຼຸດລົງຕັ້ງແຕ່ເດືອນມີນາ 2023.

ຕັ້ງແຕ່ເດືອນມີນາ 2020 ຫາເດືອນກຸມພາ 2023, ລັດຖະບານກາງໄດ້ອອກເງິນສຸກເສີນຊົ່ວຄາວເພື່ອໃຫ້ຄອບຄົວໄດ້ຮັບເງິນຊ່ວຍເຫຼືອດ້ານອາຫານເພີ່ມເຕີມໃນໄລຍະການລະບາດຂອງພະຍາດ COVID-19.

**ເລີ່ມແຕ່ເດືອນມີນາ 2023**

ຈຳນວນເງິນຊ່ວຍເຫຼືອດ້ານອາຫານທີ່ທ່ານຈະໄດ້ຮັບໂດຍບໍ່ມີການຊ່ວຍເຫຼືອສຸກເສີນເລີຍ ຈະຂຶ້ນກັບ ສະຖານະການເຈາະຈົງຂອງທ່ານ.

Washington State Department of Social & Health Services
Transforming lives
DSHS 22-1899 (1/23)

## ນີ້ແມ່ນສິ່ງທີ່ ທ່ານສາມາດເຮັດໄດ້

**ຮຽນຮູ້ວ່າຈຳນວນເງິນຊ່ວຍເຫຼືອໃໝ່ຂອງທ່ານຈະເປັນແນວໃດ**

ໂທ 877-501-2233 ແລະເລືອກທາງເລືອກການບໍລິການຕົນເອງ ຫຼື ເຂົ້າສູ່ລະບົບບັນຊີເງິນຊ່ວຍເຫຼືອລູກຄ້າຂອງທ່ານທີ່ WashingtonConnection.org.

**ຄົ້ນຫາແຫຼ່ງຂໍ້ມູນທ້ອງຖິ່ນ**

ເຂົ້າເບິ່ງ findhelp.org

ຫຼື ໂຄງການຈັບຄູ່ SNAP ຈະເພີ່ມເງິນຊ່ວຍເຫຼືອດ້ານອາຫານຂອງທ່ານ ເພື່ອໃຫ້ທ່ານສາມາດຊື້ຜັກ ແລະໝາກໄມ້ໄດ້ຫຼາຍຂຶ້ນ.

ຫຼື 211.org

**ລາຍງານການປ່ຽນແປງ**

ຖ້າສະຖານະການໃນຊີວິດຂອງທ່ານມີການປ່ຽນແປງ, ທ່ານອາດມີສິດໄດ້ຮັບຈຳນວນເງິນຊ່ວຍເຫຼືອທີ່ສູງກວ່າ. ໂທ 877-501-2233, ໄປທີ່ WashingtonConnection.org, ຢ້ຽມຢາມ Community Services Office (ຫ້ອງການບໍລິການຊຸມຊົນ) ໃນທ້ອງຖິ່ນຂອງທ່ານ ເພື່ອລາຍງານການປ່ຽນແປງຂະໜາດຂອງຄົວເຮືອນ, ລາຍຮັບ ຫຼື ຄ່າໃຊ້ຈ່າຍ.

## ພວກເຮົາເຂົ້າໃຈວ່າສິ່ງນີ້ຈະມີຜົນກະທົບຢ່າງຫຼວງຫຼາຍຕໍ່ຄອບຄົວໃນທົ່ວລັດ Washington ແລະ ພວກເຮົາຢູ່ທີ່ນີ້ ເພື່ອສະໜັບສະໜູນທ່ານໃນໄລຍະການປ່ຽນແປງນີ້.

**ຖ້າທ່ານມີຄຳຖາມໃດໆ,**
ຕິດຕໍ່ພວກເຮົາທີ່ 877-501-2233.

## ຕິດຕໍ່ຫາພວກເຮົາ

**ສຳລັບຂໍ້ມູນເພີ່ມເຕີມ**

ຢ້ຽມຢາມພວກເຮົາທີ່ dshs.wa.gov.

**ສະໝັກທາງອອນລາຍ**

ທີ່ WashingtonConnection.org.

ໂທຫາພວກເຮົາສຳລັບທາງເລືອກການບໍລິການຕົນເອງໄດ້ຕະຫຼອດ 24/7 ຫຼື ລົມກັບຜູ້ຊ່ຽວຊານຈາກ 8 ໂມງເຊົ້າ ຫາ 5 ໂມງແລງທີ່ 877-501-2233.

ມາພົບພວກເຮົາດ້ວຍຕົນເອງໂດຍການໄປຢ້ຽມຢາມ Community Services Office (ຫ້ອງການບໍລິການຊຸມຊົນ) ໃນທ້ອງຖິ່ນຂອງທ່ານ

ຊອກຫາຫ້ອງການທ້ອງຖິ່ນຂອງທ່ານ: dshs.wa.gov/office-locations.



DSHS CSD
Customer Service Center
(ສູນບໍລິການລູກຄ້າ)
PO BOX 11699
Tacoma, WA 98411-6699